**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ຫ້ອງການປົກຄອງ

ເລກທີ 01 /ຈນວ
ລົງວັນທີ 24 FEB 2015

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຕໍ່ການຈັດຕັ້ງນຳພາການຮັກສາຄວາມສະອາດ,ຈັດສັນຄວາມເປັນ ລະບຽບຮຽບຮ້ອຍ ແລະ ປະດັບປະດາ ຕາມຖະໜົນທົ່ວນະຄອນວຽງຈັນ.

ເຖິງ: - ທ່ານເຈົ້າເມືອງ, ທ່ານຫົວໜ້າພະແນກການ- ຫ້ອງການທຽບເທົ່າ ອ້ອມຂ້າງນະຄອນ ວຽງຈັນ

- ທ່ານຫົວໜ້າຫ້ອງການກະຊວງ-ຫ້ອງການທຽບເທົ່າຂອງສູນກາງພັກ, ລັດຖະບານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.
- ທ່ານຜູ້ອຳນວຍການສະຖາບັນ, ວິສາຫະກິດ, ອົງການຈັດຕັ້ງສັງຄົມ ແລະ ຊາວນະ ຄອນວຽງຈັນ.

ສັງເກດເຫັນວ່າໃນໄລຍະທີ່ຜ່ານມາ, ນະຄອນວຽງຈັນຂອງພວກເຮົາໄດ້ມີການພັດທະນາໃນທຸກດ້ານດ້ວຍຈັງຫວະໄວສົມຄວນ, ພື້ນຖານໂຄງລ່າງດ້ານຕ່າງໆ, ການກໍ່ສ້າງຕຶກອາຄານ, ເຮືອນຢູ່, ສູນການຄ້າ, ກິດຈະການສາທາລະນະປະໂຫຍດ, ຍານພະຫະນະມີການເພີ່ມຂຶ້ນຢ່າງໄວວາ... ສິ່ງເຫຼົ່ານັ້ນເປັນການປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ມີໃບໜ້າໃໝ່ດີຂື້ນຢ່າງຈະແຈ້ງ. ແຕ່ໄປພ້ອມກັບດ້ານຕັ້ງໜ້າກໍຍັງມີສິ່ງຫຍໍ້ທໍ້ຕາມມາເຊັ່ນ: ມີສິ່ງເສດເຫຼືອຈາກກິດຈະກຳການກໍ່ສ້າງ, ຂີ້ເຫຍື້ອ, ບັນຫານ້ຳຖ້ວມຂັງຫຼາຍຈຸດ, ການຈອດລົດ, ການຂາຍເຄື່ອງຕາມທາງຄົນຍ່າງ, ການຕິດຕັ້ງປ້າຍທັງໃນເຂດຕົວເມືອງ ແລະ ຊານເມືອງ ແບບຊະຊາຍບໍ່ໄດ້ເປັນໄປຕາມກົດໝາຍຜັງເມືອງ ແລະ ໄລຍະຜ່ານມາເຖິງວ່າໄດ້ມີການຈັດຕັ້ງນຳພາແກ້ໄຂຢ່າງຕໍ່ເນື່ອງ ແລະ ມີຄວາມຄືບໜ້າເປັນກ້າວໆມາ, ຫາກສະພາບເຫຼົ່ານັ້ນ ຍັງມີໃຫ້ເຫັນຢ່າງແພ່ຫຼາຍຢູ່. ສິ່ງເຫຼົ່ານັ້ນໄດ້ສະແດງໃຫ້ເຫັນມາລະຍາດ ແລະ ຄວາມບໍ່ສີວິໄລ ຂອງຄົນນະຄອນຫຼວງ ແລະ ມີຜົນກະທົບຕໍ່ພາບພົດການບໍລິຫານຕົວເມືອງຂອງພວກເຮົາ.

ເພື່ອຢັບຢັ້ງ ແລະ ແກ້ໄຂບັນຫາດັ່ງກ່າວໃຫ້ຫຼຸດຜ່ອນລົງ ແລະ ເຮັດໃຫ້ນະຄອນວຽງຈັນກາຍເປັນເມືອງ ໜ້າຢູ່ ແລະ ມີການພັດທະນາທີ່ຍືນຍົງ ສົມກັບເປັນເມືອງຫຼວງຂອງປະເທດ, ໂດຍປະຕິບັດຕາມ

ການຊີ້ນຳຂອງ ຄະນະກຳມະການລະດັບຊາດເພື່ອສະເຫຼີມສະຫຼອງວັນບຸນສຳຄັນຂອງພັກ ແລະ ຂອງຊາດໃນປີ 2015, ຜັນຂະຫຍາຍມະຕິຂອງ ກອງປະຊຸມຄັ້ງທີ 9 ສະໄໝທີ V ຂອງຄະນະບໍລິຫານງານພັກນະຄອນຫຼວງວຽງຈັນ ແລະ ບົນພື້ນຖານການຕົກລົງຂອງກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນເປີດກ້ວາງ ຮ່ວມກັບອະນຸກຳມະການຮັກສາອະນາໄມ ແລະ ປະດັບປະດາຕົວເມືອງ ເພື່ອກະກຽມສະເຫຼີມສະຫຼອງສອງວັນປະຫວັດສາດ ຄັ້ງວັນທີ 19/2/2015, ເພື່ອຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນວຽງຈັນ, ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວຄົບຮອບ 60 ປີ (ວັນທີ 22/3/1955- 22/3/2015); ວັນຊາດທີ 2 ທັນວາ ຄົບຮອບ 40 ປີ (2/12/1975- 2/12/2015) ແລະ ກອງປະຊຸມສາກົນທີ່ຈະຈັດຂຶ້ນຢູ່ນະຄອນວຽງຈັນໃນຕໍ່ໜ້ານີ້ໃຫ້ສົມກຽດ ແລະ ມີໝາກມີຜົນເປັນຢ່າງດີ.

## ເຈົ້າຄອງນະຄອນວຽງຈັນ ອອກຄຳສັ່ງ:

1. ໃຫ້ທຸກເມືອງ, ທຸກພະແນກການ-ອົງການທຽບເທົ່າ ອ້ອມຂ້າງນະຄອນຫຼວງວຽງຈັນ, ທຸກຫ້ອງການ-ສຳນັກງານຂອງກະຊວງ-ອົງການທຽບເທົ່າຂັ້ນສູນກາງ, ສະຖາບັນ, ວິສາຫະກິດ ຕະຫຼອດເຖິງທຸກບ້ານ ແລະ ທຸກຄອບຄົວ ໃຫ້ເພີ່ມທະວີການຮັກສາຄວາມສະອາດເປັນຕົ້ນຕາມຖະໜົນໃນທົ່ວນະຄອນຫຼວງວຽງຈັນ ໂດຍໃຫ້ ສຸມໃສ່ເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງໃຈກາງເມືອງ ເລີ່ມແຕ່ທ້າຍເດືອນກຸມພາ 2015 ເປັນຕົ້ນໄປຢ່າງເປັນຂະບວນການ ແລະ ເປັນລະບົບຕໍ່ເນື່ອງໄປຈົນຮອດກອງປະຊຸມສຸດຍອດອາຊຽນ ປີ 2016 ໃນນັ້ນ, ເປົ້າໝາຍຂອງການຮັກສາຄວາມສະອາດແມ່ນ:

**ໜຶ່ງ:** ເກັບຂີ້ເຫຍື້ອຢູ່ໃນທຸກເສັ້ນທາງ, ທຸກສຳນັກງານ-ອົງການ, ທຸກບ້ານ, ທຸກເຮືອນ, ສະຖານທີ່ສາທາລະນະ, ຕະຫຼາດ, ສະຖານີລົດ...; ຕະຄອງ, ຮ່ອງນ້ຳ,

**ສອງ:** ດູດຂີ້ຝຸ່ນ, ລ້າງທາງ, ກຳຈັດສິ່ງເສດເຫຼືອ, ສິ່ງຮົກເຮື້ອ, ນ້ຳເປື້ອນ, ນ້ຳເສັຍ ໃນທຸກເສັ້ນທາງ,

**ສາມ:** ບູລະນະ, ສ້ອມແປງຄືນໃໝ່ ແລະ ໃຫ້ທາສີເຮືອນ, ຕຶກອາຄານ, ຂອງພາກສ່ວນຕົນ ໃຫ້ຈົບງາມ (ໃໝ່ທຸກເວລາ) ເປັນຕົ້ນໃຫ້ແກ້ໄຂເຮືອນ, ຕຶກອາຄານ, ທີ່ເກົ່າແກ່, ຊຸດໂຊມໃຊ້ການບໍ່ໄດ້ແລ້ວໃຫ້ໄວ.

**ສີ່:** ໃຫ້ເອົາໃຈໃສ່ຮັກສາຄວາມສະອາດຕໍ່ໂຄງການ, ກິດຈະກຳກໍ່ສ້າງໃໝ່ຂອງຕົນໂດຍໃຫ້ມີການກັ້ນ ແລະ ປົກປິດສິ່ງກໍ່ສ້າງ ຖືກຕາມຫຼັກການກໍ່ສ້າງໃນຕົວເມືອງ

**2. ເພີ່ມທະວີຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມເສັ້ນທາງໃນເຂດຕົວເມືອງ ແລະ ຊານເມືອງ, ໂດຍເອົາໃຈໃສ່ ແກ້ໄຂຄວາມບໍ່ເປັນລະບຽບຮຽບຮ້ອຍ 5 ເປົ້າໝາຍ ຄື:**

**ໜຶ່ງ:** ຈັດສັນແກ້ໄຂການຈອດລົດຊະຊາຍ, ຂັດກັບມາດຕາ 1 ແລະ ມາດຕາ 5 ຂອງກົດໝາຍຜັງເມືອງ ສະບັບເລກທີ 0399/ສພຊ ແລະ ລະບຽບການທີ່ທາງການກຳນົດ;

**ສອງ:** ຮື້ຖອນສິ່ງຕໍ່ເຕີມຕາມແຄມທາງ (ຕູບ, ເທີບ, ເງີບ); ເອົາໃຈໃສ່ຄຸ້ມຄອງເຂດການກໍ່ສ້າງ, ກອງຫີນ, ກອງຊາຍຕາມແຄມທາງ ເມື່ອເປິະເປື້ອນຕ້ອງມີການອະນາໄມ;

**ສາມ:** ຮື້ຖອນການຕິດປ້າຍໂຄສະນາ, ປ້າຍແນະນຳ ທີ່ບໍ່ຖືກຕ້ອງກັບລະບຽບການ ແລະ ຕິດຕັ້ງບໍ່ສຸພາບ, ບໍ່ຮັບປະກັນຄວາມປອດໄພ.

**ສີ່:** ແກ້ໄຂສິ່ງກີດຂວາງຕາມທາງຄົນຍ່າງ ແລະ ຕາມເຂດສາທາລະນະ;

**ຫ້າ:** ບໍ່ໃຫ້ຂາຍເຄື່ອງຂອງ, ລວມທັງຂາຍຫວຍ ຕາມທາງຄົນຍ່າງ, ເສັ້ນທາງ ຫຼື ຈຸດທີ່ບໍ່ອະນຸຍາດຂອງ ທາງການ

**ຫົກ:** ມຸ້ງມັດຈັດວາງສາຍໄຟ, ສາຍໂທລະສັບ ຕາມເສັ້ນທາງໃຈກາງເມືອງໃຫ້ເປັນລະບຽບຮຽບຮ້ອຍ.

3. <u>ໃຫ້ປະດັບປະດາ</u>ສຳນັກງານ ແລະ ຕາມຖະໜົນຫົນທາງ, ສະໜາມຫຼວງ, ສວນສາທາລະນະ ແລະ ເຮືອນຂອງຕົນ ຄື: ໃຫ້ຕິດທຸງຊາດ, ທຸງພັກ, ທຸງທິວ, ຄຳຂວັນ ແລະ ໄຟເຍືອງໃຫ້ຮຸ່ງສະຫວ່າງ ເລີ່ມແຕ່ວັນທີ 1 ມີນາ 2015 ເປັນຕົ້ນໄປ;

**4. ໃຫ້ປະຕິບັດໂມງການບໍລິການຮ້ານບັນເທີງ ຕາມເວລາທີ່ທາງການໄດ້ຕົກລົງແລ້ວ ແລະ ເລີ່ມ** ຕົ້ນແຕ່ 23:30 ນາທີບໍ່ໃຫ້ມີສຽງດັງກະທົບຕໍ່ພາກສ່ວນອື່ນ (ຍົກເວັ້ນການຈັດພິທີທຳບຸນທາງສາດສະໜາຂອງວັດ ຕ່າງໆ ທີ່ເປັນປະເພນີມາແລ້ວ).

**5. ມາດຕະການໃນການຈັດຕັ້ງປະຕິບັດ:**

**ໜຶ່ງ:** ມອບໃຫ້ ຮອງເຈົ້າຄອງນະຄອນ, ປະທານອົງການ ອພບ ເປັນຜູ້ອຳນວຍຄວບຄຸມການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃນຂອບເຂດທົ່ວນະຄອນວຽງຈັນ ແລະ ມອບໃຫ້ທ່ານເຈົ້າເມືອງ, ນາຍບ້ານເປັນເຈົ້າການ ບັນຊາການປະຕິບັດໃນຂອບເຂດຂອງຕົນ. ມອບໃຫ້ທ່ານຫົວໜ້າພະແນກການ-ອົງການທຽບເທົ່າອ້ອມຂ້າງນະ ຄອນຫຼວງວຽງຈັນ, ບັນດາທ່ານ ຫົວໜ້າຫ້ອງການກະຊວງ-ອົງການຂອງສູນກາງພັກ-ລັດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ອຳນວຍການວິສາຫະກິດຕ່າງໆ ເປັນຜູ້ຈັດຕັ້ງນຳພາຂະບວນການຮັກສາຄວາມສະອາດ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດຂອງຕົນ;

**ສອງ:** ໃຫ້ທຸກພາກສ່ວນຢູ່ນະຄອນຫຼວງວຽງຈັນຫັນເອົາວຽກງານຮັກສາຄວາມສະອາດ, ຈັດສັນຄວາມເປັນລະບຽບຮຽບຮ້ອຍ ແລະ ການປະດັບປະດາເປັນໂຄງການ, ເປັນກິດຈະກຳເຄື່ອນໄຫວ ແລະ ເປັນໜ້າທີ່ການເມືອງຂອງຕົນ, ທັງເປັນໄມ້ທາວັດແທກຄວາມດີ, ຄວາມງາມ ຫຼື ເປັນທັງຈຸດອ່ອນ, ຂໍ້ບົກຜ່ອງ ຂອງພາກສ່ວນຕົນ, ໂດຍໃຫ້ມີການກວດກາ, ປະເມີນຜົນ ແລະ ໃຫ້ຄະແນນ " ຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍ" ໃນທຸກໆເດືອນ, ທຸກ 3 ເດືອນ, 6 ເດືອນ ແລະ 1 ປີ ຢ່າງເປັນປະຈຳ.

**ສາມ: ມອບໃຫ້:**

+ ຄະນະໂຄສະນາອົບຮົມ, ພະແນກຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວອອກເອກະ

ສານເພື່ອສຶກສາອົບຮົມປະຊາຊົນທົ່ວນະຄອນຫຼວງວຽງຈັນ ພ້ອມທັງເປັນຜູ້ເຜີຍແຜ່, ປະຊາສຳພັນຄຳສັ່ງສະບັບນີ້ ແລະ ປຸກລະດົມປະຊາຊົນຊາວນະຄອນວຽງຈັນ ແລະ ແຂກເມືອງໃຫ້ເຂົ້າຮ່ວມຂະບວນການຮັກສາຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມຖະໜົນທົ່ວນະຄອນຫຼວງວຽງຈັນຕາມຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ,

+ ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ກອງບັນຊາການ ປກສ ນະຄອນຫຼວງແລະ ພະແນກສາທາລະນະສຸກ ນະຄອນຫຼວງເປັນເຈົ້າການປະຕິບັດ ແລະ ເປັນຜູ້ຊ່ວຍທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນ, ເປັນອົງການຄຸ້ມຄອງ ແລະ ຮັບຜິດຊອບໂດຍກົງຕໍ່ຜົນໄດ້ ແລະ ຜົນເສຍກ່ຽວກັບການຮັກສາອະນາໄມ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຖະໜົນຕາມກົດໝາຍ ແລະ ນິຕິກຳລຸ່ມກົດໝາຍກ່ຽວຂ້ອງໄດ້ກຳນົດແລ້ວ,

6. ທຸກອົງການຈັດຕັ້ງຂອງພາກລັດ, ເອກະຊົນ ແລະ ຊາວນະຄອນຫຼວງວຽງຈັນຈົ່ງຮັບຮູ້ ແລະ ໃຫ້ການ ຮ່ວມມືຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ເກີດຜົນເປັນຢ່າງດີ

7. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າຄອງນະຄອນວຽງຈັນ,
ທົວໜ້າອະນຸກຳມະການອະນາໄມ ແລະ ປະດັບປະດາ
ຕົວເມືອງ ເພື່ອກະກຽມສະເຫຼີມສະຫຼອງ 2 ວັນປະຫວັດສາດ ປີ 2015.

ດຣ.ສິນລະວົງ ຄຸດໄພທູນ